---

ກະຊວງ ອຸດສາຫະກຳ ແລະ ການຄ້າ

ເລກທີ 2505 /ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 29 DEC 2010

**<u>ແຈ້ງການ</u>**

## ກ່ຽວກັບການຈັດຕັ້ງປະຕິບັດລະບຽບຂັ້ນຕອນການອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າ(OCP) ແລະ ແບບຟອມໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ(Form E) ສະບັບປັບປຸງ ພາຍໃຕ້ສັນຍາການຄ້າເສລີອາຊຽນ-ຈີນ (ACFTA)

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງກະຊວງ ອຸດສາຫະກຳ ແລະການຄ້າ ສະບັບເລກທີ 188/ນຍ, ລົງວັນທີ 17 ສິງຫາ 2006.
- ອີງຕາມອະນຸສັນຍາ ວ່າດ້ວຍການຮັບຮອງເອົາລະບຽບຂັ້ນຕອນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າສະບັບປັບປຸງໃໝ່ ທີ່ລົງນາມກັນໃນຄັ້ງວັນທີ 29/10/2010
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍແຫລ່ງກຳເນີດສິນຄ້ານຳເຂົ້າ ແລະສົ່ງອອກ ສະບັບເລກທີ 228/ນຍ, ລົງວັນທີ 22/04/2010
- ອີງຕາມການສະເໜີຂອງກົມການນຳເຂົ້າ ແລະສົ່ງອອກ.

ກະຊວງອຸດສາຫະກຳ ແລະການຄ້າ ອອກແຈ້ງການ ດັ່ງນີ້ :

1. ນັບແຕ່ວັນທີ 1 ມັງກອນ 2011 ເປັນຕົ້ນໄປ ມອບໃຫ້ກົມການນຳເຂົ້າ ແລະສົ່ງອອກ (ພະແນກຄຸ້ມຄອງແຫລ່ງກຳເນີດສິນຄ້າ), ພະແນກອຸດສາຫະກຳ ແລະ ການຄ້ານະຄອນຫລວງ ແລະ ພະແນກອຸດສາຫະກຳ ແລະການຄ້າແຂວງໃນທົ່ວປະເທດ ຈັດຕັ້ງປະຕິບັບລະບຽບຂັ້ນຕອນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າສະບັບປັບປຸງ ແລະ ອອກ Form E ສະບັບປັບປຸງ(13 ຫ້ອງ). ສຳລັບ Form E ແບບເກົ່າ(12 ຫ້ອງ) ແມ່ນສາມາດອອກຄວບຄູ່ກັນກັບ Form E ສະບັບປັບປຸງ(13 ຫ້ອງ) ໄດ້ຮອດວັນທີ 28/2/2011. ເລີ່ມແຕ່ວັນທີ 1/3/2011 ເປັນຕົ້ນໄປ ແມ່ນໃຫ້ອອກແຕ່ Form E ສະບັບປັບ ປຸງ(13 ຫ້ອງ)ເທົ່ານັ້ນ.

ຍື່ນຄຳຮ້ອງຕາມແບບຟອມທີ່ໄດ້ກຳນົດໄວ້ ຕໍ່ເຈົ້າໜ້າທີ່ກ່ຽວຂ້ອງ ທີ່ກ່າວໄວ້ໃນວັກ 1 ຂ້າງເທິງ.

3. ມອບໃຫ້ກົມການນຳເຂົ້າ ແລະສົ່ງອອກ ຮ່າງບົດແນະນຳທາງດ້ານວິຊາການຕາມສິດ ແລະໜ້າທີ່ຂອງຕົນເພື່ອຈັດຕັ້ງປະຕິບັດລະບຽບຂັ້ນຕອນການອອກໃບຢັ້ງຢືນແຫລ່ງກຳເນີດສິນຄ້າສະບັບປຸງ ແລະ Form E ສະບັບປັບປຸງ ຢ່າງມີປະສິດທິຜົນ.

4. ຖ້າວ່າ ມີບັນຫາເກີດຂຶ້ນກ່ຽວກັບ ການຈັດຕັ້ງປະຕິບັດແຈ້ງການສະບັບນີ້ ໜ່ວຍງານຂອງລັດ ແລະຜູ້ດຳເນີນທຸລະກິດທີ່ກ່ຽວຂ້ອງ ຄວນລາຍງານຕໍ່ກະຊວງອຸດສາຫະກຳ ແລະການຄ້າ ໃຫ້ໄວເທົ່າທີ່ຈະໄວໄດ້ ເພື່ອແກ້ໄຂ ຢ່າງທັນເວລາ.

5. ແຈ້ງການສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ